# ອົງຄ໌ການສະຫະປະຊາຊາດຕັ້ງຂຶ້ນເພື່ອຫຍັງ?

## ເຜີຍແບຄວາມຟຸ່ມເຟືອຍສິ້ນເປືອງແລະຫລົ້ມແຫລວຂອງອົງຄ໌ການໂລກ

ຄົນລາວຜູ້ທີ່ມີອາຍຸ 45 ປີ ຂຶ້ນເມືອຄົງຈຳໄດ້ວ່າສັນຍາເຊີແນວປີ 1954 ໄດ້ແຕ່ງຕັ້ງຄນະກັມການກວດກາຢຸດຍິງໄປປະຕິບັດງານຢູ່ປະເທສລາວ ທຳໜ້າທີ່ຖອນທະຫານຕ່າງດ້າວອອກຈາກລາວແລະຄວບຄຸມການຢຸດຍິງລະຫວ່າງກຳລັງຂອງຝ່າຍຣັຖບາລ ແລະຝ່າຍລາວຄອມມິວນິສຕ໌. ຄນະກັມການດັ່ງກ່າວປະກອບດ້ວຍກອງກຳລັງຈາກປະເທສການາດາ, ໂປໂລຍແລະອິນເດັຍ. ຄນະກັມການດັ່ງກ່າວນີ້ບໍ່ໄດ້ເຮັດຫຍັງ ພຽງແຕ່ນັ່ງກິນນອນກິນສເວີຍຄວາມສຸຂໄປແຕ່ລະວັນສິ້ນເປືອງເງິນງົບປະມານຂອງອົງຄ໌ການຢ່າງໄຮ້ປະໂຍຊນ໌. ທະຫານຕ່າງປະເທສ ເຊັ່ນທະຫານແກວກໍຍັງມີຢູ່ໃນປະເທສລາວຈົນເທົ່າທຸກວັນນີ້. ກຳລັງຝ່າຍລາວຄອມມິວນິສຕ໌ກໍມີແຕ່ສວຍອກາສໂຈມຕີຍຶດເອົາທີ່ໝັ້ນຂອງຝ່າຍຣັຖບາລ ເທື່ອລະເລັກ ລະນ້ອຍຈົນໄດ້ຊັຍຊນະໃນປີ 1975 ແລະກຳອຳນາຈຜູກຂາດການປົກຄອງແບບຜະເດັດການມາຈົນຮອດປັດຈຸບັນ. ສົນທິສັນຍາຕ່າງໆ ກໍກັບກາຍເປັນເສດກະດາດທີ່ບໍ່ມີຄວາມໝາຍຫຍັງ ເພາະວ່າອົງຄ໌ສະຫະປະຊາຊາດບໍ່ໄດ້ເອົາຫົວໃສ່ໃຈຊາຕໍ່ບັນຫາຂອງລາວເລີຍ. ທັງນີ້ບໍ່ແມ່ນເປັນຍ້ອນວ່າລາວເປັນປະເທສນ້ອຍ ແຕ່ວ່າມັນເປັນຍ້ອນວ່າ ອົງຄ໌ການສະຫະປະຊາຊາດຂາດປະສິດທິພາບໃນການປະຕິບັດໜ້າທີ່ແລະຮັບເອົາສມາຊິກຢ່າງບໍ່ເລືອກໜ້າແລະມີປະເທສສມາຊິກຣຸ່ນຫລັງເປັນປະເທສທີ່ມີນະໂຍບາຍເຫັນແກ່ໂຕເອງ, ເຫັນແກ່ປະເທສທີ່ເປັນພັກພວກ, ແທນທີ່ຈະເຫັນແກ່ຄວາມຍຸຕິທັມແລະຄວາມສງົບສຸຂຂອງໂລກຕາມເຈຕນາຣົມທີ່ແທ້ຈິງຂອງອົງຄ໌ການ. ຕົວຢ່າງ ເມື່ອບໍ່ດົນທີ່ຜ່ານມານີ້ ເມື່ອທ່ານບູສ ປະທານາທິບໍດີແຫ່ງສະຫະຣັຖໄດ້ຍື່ນຍັດຕິຂໍໃຫ້ອົງຄ໌ສະຫະປະຊາຊາດພິຈາຣະນາໂດຍດ່ວນ ໃຫ້ອົງຄ໌ການສະຫະປະຊາຊາດຊ່ວຍໃນການທຳສົງຄາມປົດປ່ອຍປະເທສອີຣັກ, ແຕ່ວ່າ ອົງຄ໌ການບໍ່ໄດ້ຟ້າວຮີບຮ້ອນພິຈາຣະນາຍັດຕິດັ່ງກ່າວ ກັບໄປສົນໃຈພິຈາຣະນາຄຳຮ້ອງຂອງປະເທສສວິດເຊີແລນດ໌ທີ່ຂໍເຂົ້າເປັນສມາຊິກ. ບັນຫາຂັດຂ້ອງທີ່ຕົກລົງກັນບໍ່ໄດ້ໃນການພິຈາຣະນາຄຳຮ້ອງຂອງສະວິດເຊີແລນດ໌ ທີ່ອົງຄ໌ການຖືວ່າສຳຄັນສູງສຸດ ລາກແກ່ຍືດຍາວຈົນບໍ່ມີວັນສິ້ນສຸດຕົກລົງກັນບໍ່ໄດ້ກໍຄື ມີປະເທສສມາຊິກກຸ່ມນຶ່ງ ຄັດຄ້ານ ບໍ່ຢາກຮັບເອົາປະເທສສວິດເຊີແລນດ໌ເປັນສມາຊິກເພາະວ່າທຸງຊາດຂອງປະເທສສວິດເຊີແລນດ໌ເປັນຮູບສີ່ຫລ່ຽມມົນທົນແລະຢາກໃຫ້ປະເທສສວິດເຊີແລນດ໌ປ່ຽນທຸງຊາດໃໝ່ ໃຫ້ເປັນຮູບສີ່ຫລ່ຽມເປ ຖຽງກັນໄປຖຽງກັນມາ ເສັຍເວລາໂດຍບໍ່ຈຳເປັນແລະບໍ່ເຫັນຄວາມສຳຄັນຂອງຄຳຮ້ອງດ່ວນຂອງທ່ານບູສເລີຍ.

ທາງດ້ານການປົກປ້ອງຄຸ້ມຄອງສິດທິມະນຸສໂລກກໍບໍ່ຫລ້ອນໜ້າທີ່. ໃນເວລາບໍ່ດົນທີ່ຜ່ານມານີ້ ປະເທສຄິວບາ ກຳລັງຮີບເຮັ່ງທະວີການປາບປາມກວດລ້າງປະຊາຊົນຊາວຄິວບາທີ່ອອກຄວາມຄິດຄວາມເຫັນຫລືຊອກຫາທາງໄປສູ່ເສຣີພາບ ຕົວຢ່າງ ຜູ້ທີ່ວິພາກວິຈານຟີແດລ ຄາສໂຕຣ ກວ່າ 70 ຄົນຖືກຈັບແລະຖືກຕັດສິນຈຳຄຸກເຖິງ 30 ປີ; 3 ຄົນຖືກປະຫານຊີວິຕ ຍ້ອນໂທສຖານພຍາຍາມໂຕນໜີຈາກປະເທສ. ໃນວັນທີ 17 ເມສາ ອັນເປັນວັນລົງມະຕິປະນາມຟີແດລ ຄາສໂຕຣ ລະເມີດສິດທິມະນຸສໃນປະເທສຄິວບາ ຄນະກັມການກັບອອກ

ຖແລງການປະນາມສຫະຣັຖວ່າ ເປັນປະເທສທີ່ໃຊ້ອຳນາຈອິດທິພົລແຊກແຊງກິຈການພາຍໃນຂອງປະເທສອື່ນແລະປິດບັງຄວາມຈິງກ່ຽວກັບສພາບການໃນປະເທສອື່ນ. ຈະບໍ່ໃຫ້ອອກຖແລງການແບບນີ້ໄດ້ແນວໃດ ເພາະວ່າ ປະທານຄນະກັມການປົກປ້ອງສິດທິມະນຸສທັມກໍແມ່ນ ມູມມາ ກາດາຟີ ຈອມຜະເດັດການແຫ່ງປະເທສລີເບັຍ, ສມາຊິກກໍມີປະເທສທີ່ປົກຄອງດ້ວຍລະບອບຜເດັດການທັງສິ້ນ ເຊັ່ນ ວຽຕນາມ, ຊູດານ, ຈີນ, ຊິມບາບເວ ແລະ ອາລຈີເຣັຽ ເປັນຕົ້ນ. ທັ້ງໆທີ່ປະຊາຊົນຊາວອະເມຣິກັນຜູ້ເສັຍພາສີໃຫ້ຣັຖໄດ້ທຸ່ມເທເງິນຄ່ຳຊູອົງຄ໌ການນີ້ປີນຶ່ງບໍ່ຕ່ຳກວ່າ 300 ລ້ານດອລລາຣ໌ກໍບໍ່ໄດ້ຮັບປະໂຍຊຫຍັງ.

ອົງຄ໌ການສຫະປະຊາຊາຕທີ່ເປັນການຈັດຕັ້ງທີ່ໃຫຍ່ທີ່ສຸດໃນໂລກ, ມີພະນັກງານກວ່າ 65,000 ຄົນ ແລະໃຊ້ງົບປະມານປີລະບໍ່ຕ່ຳກວ່າ 1,150 ລ້ານດອລລາຣ໌ແຕ່ຍັງບໍ່ສາມາດເຮັດວຽກໃຫ້ຫລ້ອນໜ້າທີ່, ອ່ອນແອແລະຂາດປະສິດທິພາບ. ໃນການກວດກາເມື່ອປີ 1999 ໄດ້ພົບວ່າ ອົງຄ໌ການ ຣະບາດເຕັມໄປດ້ວຍການຫລິ້ນພັກຫລິ້ນພວກແລະສໍ້ໂກງ. ວ່າຈ້າງເອົາແຕ່ພີ່ນ້ອງພັກພວກເຂົ້າເຮັດການ, ລັກເອົາຍານພາຫະນະຂອງອົງຄ໌ການໄປເປັນຂອງສ່ວນຕົວ, ສໍ້ໂກງເອົາເງິນງົບປະມານໂດຍເຊັນເຊັກໃຫ້ໂຕເອງຢ່າງດື້ໆ ແລະປອມແປງໃບຮັບເງິນຢ່າງເສີຍໆ ເພາະວ່າຂາດການໃຊ້ຣະບົບສມຸດບັນຊີທີ່ຖືກຕ້ອງ. ທີ່ເປັນຂ່າວຢ່າງກວ້າງຂວາງເມື່ອປີກາຍນີ້ກໍຄື ມີເຈົ້າໜ້າທີ່ອົງຄ໌ການຢູ່ອາຟຣິກກາພາກັນວາງແຜນຕົວະຕົ້ມເອົາເງິນນຳຊາວອົບພຍົບໂດຍໃຫ້ຄຳສັນຍາວ່າຈະສົ່ງໄປຕັ້ງຊີວິຕໃໝ່ຢ່າງມີຄວາມສຸຂຢູ່ປະເທສຕະເວັນຕົກ. ໃນຂນະດຽວກັນນີ້ ພະນັກງານຂອງອົງຄ໌ການຈຳນວນນຶ່ງ ຖືກເນຣະເທສອອກຈາກປະເທສບອສເນັຍເພາະຖືກພົບວ່າພາກັນຂາຍຍິງສາວໄປເປັນໂສເພນີ.

ດັ່ງທີ່ກ່າວມາແລ້ວນີ້ເປັນພຽງຕົວຢ່າງເທົ່ານັ້ນ ຈະນຳມາເລົ່າໝົດປີກໍບໍ່ໝົດ ຊ້ຳບໍ່ພໍຍັງມີອີກຫລາຍເຣື່ອງທີ່ເຮົາບໍ່ຮູ້ເພາະວ່າທາງອົງຄ໌ການຮັກສາເປັນຄວາມລັບບໍ່ຍອມຊີ້ແຈງໃຫ້ໂປ່ງໃສ. ຕົວຢ່າງ ຣະຫວ່າງປີ 1996 ຫາ 2003 ໃນເວລາທີ່ອົງຄ໌ການລົງໂທສປະເທສອີຣັຄ ໃຫ້ຕັດການຄ້າຂາຍກັບພານນອກ ອະນຸຍາຕແຕ່ໃຫ້ຂາຍນ້ຳມັນເອົາເງິນຊື້ອາຫານແລະຢາປົວໃຫ້ປະຊາຊົນຊາວອີຣັຄ ອົງຄ໌ການເປັນຜູ້ກຳກັບຮັບຜິດຊອບແລະຂາຍນ້ຳມັນໄດ້ຫລາຍຮ້ອຍຕື້ດອລລາຣ໌ແຕ່ບໍ່ຮູ້ວ່າເງິນໄປໃສ, ປະຊາຊົນຊາວອີຣັຄພາກັນອຶດຢາກແລະຂາດຢາປົວພຍາທຢ່າງໜັກ ຕລອດມາ. ທາງອົງຄ໌ການກໍບໍ່ໄດ້ເອີ່ຍວ່າ ຈະທຳການສືບສວນສອບສວນເຣື່ອງນີ້ເລີຍ.

ຮ້າຍແຮງກວ່າການສໍ້ໂກງ ກໍຄືການຕົກນ້ຳທີ່ວພຽງກັນ ປະເທສສມາຊິກທຸກປະເທສມີສິດເທົ່າທຽມກັນ ບໍ່ມີໃຜດີແລະບໍ່ມີໃຜຮ້າຍກວ່າກັນ, ເວົ້າແທ້ ປະເທສທີ່ມີສິດມີສຽງນ້ອຍກວ່າໝູ່ແລະຖືກປະນາມຢູ່ເລື້ອຍກໍຄືສຫະຣັຖອະເມຣິກາແລະອິສຣາເອລ. ປຽບທຽບກໍຄືປະຊາຊົນຄົນເຮົາສເມີພາບກັນໝົດ ໂຈ້ແຍກກັນບໍ່ໄດ້ບໍ່ຮັບຮູ້ວ່າ ໃຜເປັນຕຳຣວຈ ໃຜເປັນໂຈຣ ແລ້ວຈະໄປຮັກສາຄວາມສງົບຣຽບຮ້ອຍຂອງສັງຄົມໄດ້ແນວໃດ. ສມາຊິກໃນອົງຄ໌ການສຫະປະຊາຊາຕກໍຄືກັນແລ້ວຈະໄປຮັກສາຄວາມສງົບແລະຄວາມຍຸຕິທັມຂອງໂລກໄດ້ແນວໃດ %